ສາເຫດ ການຂາດສານອາຫານ

ບົດທີ 1.4: ສາເຫດຂອງການຂາດສານອາຫານ

ຈຸດປະສົງ: ເພື່ອຮຽນຮູ້ກ່ຽວກັບສາເຫດຂອງການຂາດສານອາຫານໃນຮູບແບບທີ່ແຕກຕ່າງກັນ ແລະ ວິທີການປ້ອງກັນການຂາດສານອາຫານ.

ຂັ້ນຕອນ: ແບ່ງຜູ້ເຂົ້າຮ່ວມອອກເປັນ 5 ກຸ່ມ, ໂດຍໃຫ້ແຕ່ລະບັດຮູບພາບທີ່ມີສາເຫດທົ່ວໄປຂອງການຂາດສານອາຫານ. ໃຫ້ແຕ່ລະກຸ່ມສົນທະນາຕາມຄຳຖາມລຸ່ມນີ້. ຫຼັງຈາກນັ້ນໃຫ້ຜູ້ຕາງໜ້າ ຂຶ້ນນຳສະເໜີຜົນຂອງການສົນທະນາກັນ.

ອຸປະກອນ: ບັດຮູບພາບ ສາເຫດຂອງການຂາດສານອາຫານ 5 ໃບ

ຄຳຖາມ:

- ໃນຮູບພາບນີ້ມີຫຍັງແດ່?
- ການຂາດສານອາຫານມັນກ່ຽວຂ້ອງກັບຫຍັງແດ່?
- ສະພາບການຂາດສານອາຫານແບບນີ້ມີຢູ່ໃນໝູ່ບ້ານຂອງພວກເຮົາບໍ່?
- ພວກເຮົາຄວນເຮັດແນວໃດເພື່ອປ້ອງກັນ ຫຼື ຫຼີກເວັ້ນບັນຫາເຫຼົ່ານີ້ໄດ້?

ຄຳອະທິບາຍ: ການຂາດສານອາຫານມີຫຼາຍສາເຫດ, ລວມທັງ:

- ກິນອາຫານບໍ່ພຽງພໍ ຫຼື ກິນອາຫານທີ່ບໍ່ມີຄຸນນະພາບ
- ສຸຂາພິບານ ແລະ ສຸຂະອານາໄມບໍ່ດີ
- ຂາດການເອົາໃຈໃສ່ຕໍ່ສຸຂະພາບຂອງແມ່ ແລະ ເດັກນ້ອຍ
- ຂາດຄວາມຮູ້ກ່ຽວກັບໂພຊະນາການ ເຊັ່ນ: ບໍ່ຮູ້ຊື້ອາຫານທີ່ມີໂພຊະນາການຈາກຕະຫຼາດ, ບໍ່ຮູ້ວ່າຈະລ້ຽງ ຫຼື ປູກພືດໃຫ້ຫຼາກຫຼາຍ, ບໍ່ຮູ້ວິທີການເກັບຮັກສາອາຫານໃຫ້ໄວ້ກິນດົນ, ບໍ່ຮູ້ຈັກປຸງແຕ່ງອາຫານໃຫ້ມີໂພຊະນາການ
- ອາຫານທີ່ມີໂພຊະນາການແມ່ນຈະເກັບໄວ້ຂາຍຫຼາຍກວ່າ ໄວ້ກິນໃນຄອບຄົວ

ບົດຕໍ່ໄປແມ່ນ ເຮົາຈະມາຮຽນຮູ້ກ່ຽວກັບການຂາດສານອາຫານທີ່ສົ່ງຕໍ່ຈາກລຸ້ນສູ່ລຸ້ນ